# ປັດໄຈທີ່ສົ່ງຜົນຕໍ່ການພັດທະນາກະສິກຳປູກຝັງໃນການພັດທະນາຊຸມຊົນ ຢູ່ເມືອງທ່າແຕງ ແຂວງເຊກອງ

ບົວພັນ ວົງເສດຖາ[1], ຂານດາລາ ຄຳພິລາ[2], ອິນແປງ ສາຍວາຍາ[3], ທິບພະພອນ ພອນສະຫວັນ [4]

*ຊື່ຫຼັກສູດປະລິນຍາໂທ ສາຂາ ການພັດທະນາຊຸມຊົນແບບຍືນຍົງ ຄະນະເສດຖະສາດ ແລະ ການຄຸ້ມຄອງ*

**ບົດຄັດຫຍໍ້**

ການສຶກສາປັດໄຈທີ່ສົ່ງຜົນຕໍ່ການພັດທະນາກະສິກຳປູກຝັງໃນການພັດທະນາຊຸມຊົນ ຢູ່ເມືອງທ່າແຕງ ແຂວງເຊກອງ ແມ່ນ ມີຈຸດປະສົງເພື່ອ 1) ສຶກສາຫາລະດັບຂອງການພັດທະນາທາງດ້ານການກະສິກຳປູກຝັງເຂດເທສະບານເມືອງທ່າແຕງ,ແຂວງເຊກອງ. 2) ເພື່ອສຶກສາຫາຄວາມສຳພັນຂອງປັດໄຈທີ່ມີຜົນຕໍ່ການພັດທະນາທາງດ້ານກະສິກຳປູກຝັງເພື່ອພັດທະນາຊຸມຊົນ ເທສະບານເມືອງທ່າແຕງ, ແຂວງເຊກອງ, ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ ໄດ້ແກ່ປະຊາຊົນທີ່ອາໄສຢູ່ໃນ ບ້ານຫ້ວຍຊາຍ, ບ້ານຫຼັກຂາວ, ບ້ານເຊໂດນ, ບ້ານທ່າແຕງໃຕ້ ແລະ ບ້ານກົງຕາຢູນ ຈຳນວນ 148 ຄົນ, ເຊິ່ງປະຊາຊົນດັ່ງກ່າວແມ່ນກຸ່ມບ້ານທີ່ອາໄສການກະສິກຳປູກຝັງເປັນຫຼັກ. ເຄື່ອງມືມີໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ແບບສອບຖາມທີ່ມີຄ່າຄວາມເຊື່ອໝັ້ນ 0.96 ທາງສະຖິຕິ. ຈາກນັ້ນໄດ້ນຳໃຊ້ໂປແກຣມສຳເລັດຮູບທາງດ້ານສະຖິຕິເພື່ອວິເຄາະຫາຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ,ຄ່າບ່ຽງເບນມາດຕະຖານ ແລະ ການວິເຄາະຫາຄ່າຄວາມສຳພັນໂດຍນຳໃຊ້ Correction Analysis

ຜົນຂອງການວິໄຈ ເຫັນໄດ້ວ່າ 1) ລະດັບການພັດທະນາທາງດ້ານກະສິກຳປູກຝັງຂອງເມືອງທ່າແຕງ, ແຂວງເຊກອງ ຢູ່ໃນລະດັບປານກາງຂຶ້ນໄປ ເມື່ອຈຳແນກເປັນລາຍດ້ານ ເຫັນວ່າ ຍັງຢູ່ໃນລະດັບກາງຂຶ້ນໄປຫາລະດັບດີ ເຊິ່ງລຽງຕາມລຳດັບຂອງຄ່າສະເລ່ຍແຕ່ໃຫຍ່ຫາໜ້ອຍດັ່ງຕໍ່ໄປນີ້: ດ້ານຄວາມຮູ້ຂອງຊາວກະສິກອນ, ດ້ານເຕັກນິກການປູກ, ດ້ານຜົນຜະລິດ ແລະ ດ້ານການຕະຫຼາດ. 2) ຄວາມສຳພັນຂອງປັດໄຈທີ່ມີຜົນຕໍ່ການພັດທະນາທາງດ້ານກະສິກຳປູກຝັງເພື່ອການພັດທະນາຊຸມຊົນເຂດເທສະບານເມືອງທ່າແຕງ, ແຂວງເຊກອງ ເຫັນໄດ້ວ່າ ປັດໄຈທາງດ້ານຕົ້ນທຶນການຜະລິດ,ປັດໄຈທາງດ້ານຂະບວນການຜະລິດ, ປັດໄຈທາງດ້ານສິ່ງແວດລ້ອມ ແລະ ປັດໄຈທາງດ້ານຊັບພະຍາກອນມະນຸດແມ່ນມີຄ່າຄວາມສຳພັນຈັດລຽງແຕ່ຫຼາຍຫາໜ້ອຍກັບ ລະດັບການພັດທະນາທາງດ້ານການກະສິກຳປູກຝັງ ຢູ່ໃນລະດັບຄວາມສຳພັນລະດັບປານກາງຫາລະັບຄວາມສຳພັນທີ່ສົມບູນແບບ, ໂດຍຄວາມເຊື່ອໝັ້ນທາງດ້ານສະຖິຕິ 0.01 ແລະ ສາມາດຮ່ວມກັນອະທິບາຍ ການພັດທະນາທາງດ້ານການກະສິກຳປູກຝັງໃນເມືອງທ່າແຕງ, ແຂວງເຊກອງໄດ້. 3) ສຳລັບຂໍ້ສະເໜີແນະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງກັບວຽກງານກະສິກຳປູກຝັງເອົາໃຈໃສ່ດ້ານການສະໜອງນໍ້າ, ຍ້ອນວ່າ ປະຊາຊົນສາມາດນຳໃຊ້ນໍ້າໄດ້ໃນບາງລະດູເທົ່ານັ້ນ, ເຮັດໃຫ້ໄດ້ຮັບຜົນຜະລິດທີ່ໜ້ອຍ, ບໍ່ມີຕະຫຼອດປີ, ສະເໜີໃຫ້ມີການຝຶກອົບຮົມກ່ຽວກັບວຽກງານການກະສິກຳ, ໂດຍໃຫ້ວິຊາການມາທົດລອງໃຫ້ປະຊາຊົນເຂົ້າໃຈ, ແຕ່ລະບ້ານຄວນມີເອກະລັກຜົນຜະລິດເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ ແລະ ສຸດທ້າຍແມ່ນ ໃຫ້ປັບປຸງພືດທີ່ມີຢູ່ຂອງເຂດເມືອງທ່າແຕງໃຫ້ມີຄຸນະພາບດີ ສາມາດຕີຕະຫຼາດໄດ້ທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນຕົ້ນກາເຟ ແລະ ຜັກກະຫຼໍ່າ.

**ຄຳສັບສຳຄັນ:** ປັດໄຈ, ການພັດທະນາ, ການກະສິກຳປູກຝັງ

---

[1] *ຄະນະເສດຖະສາດແລະ ການຄຸ້ມຄອງ,ມະຫາວິທະຍາໄລຈຳປາສັກ, ອີເມວ:bouapun@gmail.com*

[2] *ຄະນະວິສະວະກຳສາດ,ມະຫາວິທະຍາໄລຈຳປາສັກ, ອີເມວ:Khandala34@gmail.com*

[3] *ຄະນະເສດຖະສາດ ແລະ ການຄຸ້ມຄອງ,ມະຫາວິທະຍາໄລຈຳປາສັກ, ອີເມວ:inpaengsayvaya@gmail.com*

[4] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: kewd2d@gmail.com*

# Factors Affecting The Development Of Agronomy For Community Development Atthateng District Sekong Province

Bouapun Vongsetha[1], Khandala Khampila[2], Inpaeng sayvaya[3], Thipphaphone Phonsavanch[4]

*Department or Affiliation: Conducting Research*

**Abstract**

Study on People Participation for planting Ginseng and Coffee to produce ODOP Production in Dak Cheung District Sekong Province. This study aimed to 1) analysis of levels of satisfaction in participation to produce ODOP production in Dak Cheung District Sekong Province. 2) to compare the people satisfaction in participation to produce ODOP production in Dak Cheung District Sekong Province, classified by gender, age, education level and income. The sample group was 234 people who lived in 5 villages are Ngone Done, Dak Vang, Dak Vor, Dak Le and Dak Cheung. The research tool was questionnaire, data analysis with descriptive statistics or basic statistics such as frequency, percentage, mean and standard deviation, hypothesis testing using inference statistics such as t-test, One-Way ANOVA or F-test and post-hoc comparison by LSD.

The results of this study found that: 1) the level of people satisfaction in participation to produce ODOP production in Dak Cheung District Sekong Province, in overall was at high level, divided each process as follows: in decision process, in production processing, on receiving benefit, and assessment process. In this result shown that No.1 is on the production process, the average is 4.22 that in high level. No.2 is the receiving benefit , the average is 3.82 that in high level. For the decision process and assessment process the average is 3.29 and 2.78 in sequence those are in the moderate level. 2) the result of comparison on people satisfaction in participation to produce ODOP production in Dak Cheng District Sekong Province of the most sampling groups are male, age less than 18 years old, the education level in lower than bachelor's degree, and the income is less than 1.5 million kip. The result of hypothesis testing found that people with different gender, ages, education levels and income had no different satisfaction in the participation to produce ODOP production in Dak Cheung District Sekong Province.

**Keywords:** Participation and ODOP.

[1] *Faculty of Economics and Management, Email: bouapun@gmail.com*
[2] *Faculty of Engineering, Champhasack University, Email:Khandala34@gmail.com*
[3] *Faculty of Economics and Management, Email: inpeang sayvaya@gmail.com*
[4] *Faculty of Economics and Management ,Email: kewd2d@gmail.com*

## 1. ພາກສະເໜີ

ປະເທດລາວ ແມ່ນມີຄວາມອຸດົມສົມບູນ ໄປດ້ວຍຊີວະນາໆພັນກະສິກຳ ໃນການຜະລິດກະສິກຳ, ເພື່ອບຳລຸງຮັກສາລະບົບນິເວດວິທະຍາ ໃຫ້ສົມບູນ ສາມາດນຳເອົາທາດອາຫານ ຄືນມາໃຊ້ໄດ້, ຮັກສາຄວາມຊຸ່ມຊື່ນ ຂອງດິນໄວ້, ສາມາດປ້ອງກັນການລະບາດຂອງພະຍາດ ແລະ ແມງໄມ້, ພ້ອມທັງເຮັດການປະສົມເກສອນ ຂອງພືດ ຕາມທຳມະຊາດເປັນໄປດ້ວຍດີ ເຮັດໃຫ້ລະບົບນິເວດວິທະຍາດີຂຶ້ນເລື້ອຍໆ ຕໍ່ການສະໜອງນ້ຳ, ພະລັງງານ, ແຮ່ທາດຕ່າງໆ (ກະຊວງກະສິກຳ ແລະ ປ່າໄມ້,2016). ການກຳນົດວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນຍຸດທະສາດບຸກທະລຸເພື່ອພັດທະນາປະເທດໃຫ້ຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ ເຊິ່ງມີທິດທາງລວມໂດຍສະເພາະ ແມ່ນກັນພັດທະນາເສດຖະກິດເປັນໃຈກາງ: ໂດຍຊຸກຍູ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ມີຄຸນະພາບຕາມທິດສີຂຽວ ແລະ ຍືນຍົງ; ຫັນປ່ຽນໂຄງປະກອບເສດຖະກິດໃຫ້ໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍເນັ້ນໃສ່ການຜະລິດທີ່ມີມູນຄ່າເພີ່ມສູງຂຶ້ນຕິດພັນກັບອຸດສາຫະກຳ ແລະ ການບໍລິການ. ຊຸກຍູ້ພັດທະນາ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດກັບສິ່ງແວດລ້ອມເຂົ້າສູ່ການຜະລິດ; ນຳໃຊ້ທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງປະເທດ (ກະຊວງແຜນການ ແລະ ການລົງທຶນ, 2016). ການພັດທະນາຊຸມຊົນ ຈິ່ງເປັນຫົວໃຈຫຼັກໃນການພັດທະນາປະເທດ ເພື່ອໃຫ້ເກີດຄວາມຈະເລີນກ້າວໜ້າຂອງປະເທດນັ້ນ, ຄວາມໝັ້ນຄົງທາງດ້ານເສດຖະກິດ, ທ່າແຮງການພັດທະນາຢ່າງຕໍ່ເນື່ອງ ແລະ ຄວາມສາມາດເພິ່ງຕົນເອງໄດ້ເປັນຕົ້ນ. ສະນັ້ນ, ການສຶກສາຄັ້ງນີ້ ແມ່ນເຫັນໄດ້ເຖິງຄວາມສຳຄັນຂອງການພັດທະນາຊຸມຊົນໂດຍສົ່ງເສີມຜະລິດຕະພັນກາຍເປັນສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໂອດອບ (ODOP), ເພື່ອເປັນການສົ່ງເສີມ ແລະ ເປັນແບບຢ່າງໃຫ້ແກ່ ຜະລິດຕະພັນອື່ນທີ່ຈະເກີດຂຶ້ນໃນອະນາຄົດ, ຈາກທ່າແຮງທາງດ້ານພູມສັນຖານ ແລະ ພູມອາກາດຂອງເມືອງດາກຈຶງ ທີ່ປະຊາຊົນສ່ວນຫຼາຍເຮັດການກະສິກຳປູກກາເຟ ທີ່ເປັນເອກະລັກຂອງເມືອງດາກຈຶງ ຈິ່ງເຮັດໃຫ້ເກີດມີຜະລິດຕະພັນ ກາເຟໂອດອບ (ຫ້ອງວ່າການເມືອງດາກຈຶງ, 2022), ນອກຈາກກາເຟແລ້ວ ກໍ່ຍັງມີໂສມທີ່ປະຊາຊົນຊາວເມືອງດາກຈຶງໄດ້ເຮັດການເພາະປູກເພື່ອກາຍເປັນສິນຄ້າສົ່ງອອກທັງພາຍໃນ ແລະ ຕ່າງແຂວງ, ທັງນີ້ກໍ່ຍັງສົ່ງໃຫ້ຜູ້ຜະລິດສິນຄ້າ ໂອດອບ ຄື ເຫຼົ້າບອງໂສມ ເພື່ອສ້າງໃຫ້ກາຍເປັນຜະລິດຕະພັນສິນຄ້າ ໂອດອບຂອງເມືອງດາກຈຶງ, ເພື່ອຕອບສະໜອງໃຫ້ແກ່ຈຸດປະສົງຂອງການສຶກສາວິໄຈຄັ້ງນີ້ ຈຶ່ງຕ້ອງໄດ້ສຶກສາ ການມີສ່ວນຮ່ວມຂອງປະຊາຊົນໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດອບ, ເພື່ອສຶກສາວ່າພາຍຫຼັງທີ່ມີຜະລິດຕະພັນດັ່ງກ່າວແລ້ວ ສາມາດສົ່ງເສີມ ຊີວິດການເປັນຢູ່ຂອງປະຊາຊົນໃນຊຸມຊົນດັ່ງກ່າວ ໃຫ້ມີທິດທາງໃນການພັດທະນາໄປໃນທາງທີ່ດີຂຶ້ນ ຫຼື ບໍ່, ທັງນີ້ ກໍ່ເພື່ອສຶກສາ ຫາລະດັບຂອງການມີສ່ວນຮ່ວມຂອງປະຊາຊົນເພື່ອການເປັນເອກະສານອ້າງອີງໃນການສ້າງຜະລິດຕະພັນ ໂອດອບ ໃນຄັ້ງຕໍ່ໄປ ແລະ ໃນເຂດອື່ນທີ່ມີທ່າແຮງການຜະລິດທີ່ແຕກຕ່າງກັນ.

## 2. ຈຸດປະສົງ

2.1 ເພື່ອສຶກສາຫາລະດັບ ການມີສ່ວນຮ່ວມ ໃນການປູກໂສມ ແລະ ກາເຟ ເພື່ອສ້າງຜະລິດຕະພັນໂອດອບໃນເມືອງດາກຈຶງ, ແຂວງເຊກອງ.

2.2 ເພື່ອປຽບທຽບລະດັບ ການມີສ່ວນຮ່ວມ ໃນການປູກໂສມ ແລະ ກາເຟ ເພື່ອສ້າງຜະລິດຕະພັນສິນຄ້າ ໂອດອບໃນເມືອງດາກຈຶງ, ແຂວງ

ເຊກອງ ເຊິ່ງຈຳແນກຕາມ ເພດ, ອາຍຸ, ລະດັບການສຶກສາ ແລະ ລາຍໄດ້.

## 3. ວິທີການຄົ້ນຄວ້າ

**ກຸ່ມຕົວຢ່າງ** ສຳລັບການວິເຄາະຫາກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ ປະຊາກອນຈະຖືກຄັດເລືອກຈາກປະຊາກອນທັງໝົດທີ່ມີຢູ່ໃນເຂດການວິໄຈ ເມືອງດາກຈຶງ, ແຂວງເຊກອງ ຈຳນວນ 5 ບ້ານ, ເຊິ່ງມີຈຳນວນຄອບຄົວລວມກັນໄດ້ 560 ຄອບຄົວທີ່ປູກກາເຟ ແລະ ໂສມປ່າ, ໂດຍໃຊ້ສູດ Taro Yamane (1973) ໄດ້ກຸ່ມຕົວຢ່າງຈຳນວນ 234 ຄອບຄົວ

**ການວິເຄາະ ແລະ ການແປຜົນຂໍ້ມູນ**

ໃນການສຶກສາຄັ້ງນີ້ ໄດ້ນຳເອົາຂໍ້ມູນປັດໄຈທີ່ມີຜົນຕໍ່ການພັດທະນາຊຸມຊົນດ້ານກະສິກຳ ທີ່ເກັບລວບລວມມາວິເຄາະໂດຍນຳໃຊ້ ໂປຣແກຣມສຳເລັດຮູບທາງສະຖິຕິ ແລະ ວິເຄາະຂໍ້ມູນ ໃນການປະມວນຜົນ ມີຂັ້ນຕອນດັ່ງຕໍ່ໄປນີ້: 1) ເກັບເອົາຂໍ້ມູນທັງໝົດໂດຍໄດ້ນຳແບບສອບຖາມ ມາເພື່ອເຮັດການກວດສອບ ແລະ ຄັດເລືອກແບບສອບຖາມ ທີ່ມີຄວາມສົມບູນຄວາມຖືກຕ້ອງທຸກສະບັບ 2) ຈາກນັ້ນປ້ອນຂໍ້ມູນເຂົ້າໃນ ໂປຣແກຣມສຳເລັດຮູບທາງດ້ານສະຖິຕິເພື່ອເຮັດການວິເຄາະ ສຳລັບ Likert ເປັນຕົວວັດລະດັບຄື 5=ຫຼາຍທີ່ສຸດ, 4=ຫຼາຍ, 3=ປານກາງ, 2=ໜ້ອຍ ແລະ 1=ໜ້ອຍທີ່ສຸດ.

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ໃນການວິເຄາະ ຂໍ້ມູນຜູ້ສຶກສາໄດ້ນຳເອົາຫຼັກສະຖິຕິມາປະກອບການວິເຄາະ ຂໍ້ມູນດັ່ງນີ້

1). ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ແກ່ ຄວາມຖີ່ (Frequency) ຄ່າສ່ວນຮ້ອຍ (Percentage)

2). ສະຖິຕິທີ່ໃຊ້ໃນການວິເຄາະລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ເພື່ອການສ້າງຜະລິດຕະພັນສິນຄ້າ ໂອດອບ ແມ່ນ, ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation)

3). ແລະ ການທົດສອບສົມມຸດຖານດ້ວຍສະຖິຕິອ້າງອີງ (Inferential Statistic) ໄດ້ແກ່ T-test ແລະ One-way ANOVA ໂດຍກຳນົດລະດັບຄວາມສຳຄັນທາງດ້ານສະຖິຕິທີ່ 0.05.

4) ການວິເຄາະຫາຄ່າຄວາມແຕກຕ່າງ ຄ່າສະເລ່ຍແບບຄູ່ດ້ວຍວິທີ Least-square test: LSD)

## 4. ຜົນໄດ້ຮັບ

ລະດັບການມີສ່ວນຮ່ວມ ໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ເມືອງດາກຈຶງ ແຂວງເຊກອງ ໃນຂັ້ນຕອນການຕັດສິນໃຈ.

ຈາກການສຶກສາການມີສ່ວນຮ່ວມຂອງປະຊາຊົນ ລະດັບການມີສ່ວນຮ່ວມຂອງປະຊາຊົນທີ່ເປັນກຸ່ມຕົວຢ່າງທາງດ້ານການຕັດສິນໃຈ ໃນຫົວຂໍ້ຂອງການສ້າງບ້ານໃຫ້ກາຍເປັນເປົ້າໝາຍ ເພື່ອປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ມີລະດັບການມີສ່ວນຮ່ວມທີ່ມີຄ່າສະເລ່ຍສູງ (ຄ່າສະເລ່ຍ=4.17) ເຊິ່ງມີລະດັບການມີສ່ວນຮ່ວມຫຼາຍ. ລະດັບການມີສ່ວນຮ່ວມ ໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ. ການສຶກສາການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດອບ ໃນເມືອງດາກຈຶງ ແຂວງເຊກອງ, ໃນຂັ້ນຕອນຂອງຂະບວນການຜະລິດ, ສຳລັບພາບລວມແລ້ວເຫັນໄດ້ວ່າ ປະຊາຊົນທີ່ເປັນກຸ່ມຕົວຢ່າງແມ່ນມີສ່ວນຮ່ວມໃນລະດັບຫຼາຍທີ່ສຸດ,

ເມື່ອອະທິບາຍເປັນຂໍ້ຢ່າງລະອຽດເຫັນໄດ້ວ່າ ປະຊາຊົນໄດ້ມີສ່ວນຮ່ວມໃນຂະບວນການກະກຽມດິນເພື່ອປູກກາເຟ ແລະ ໂສມ ຢູ່ໃນລະດັບການມີສ່ວນຮ່ວມຫຼາຍທີ່ສຸດ (ມີຄ່າສະເລ່ຍ =4.29).

ລະດັບການມີສ່ວນຮ່ວມ ໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ເມືອງດາກຈຶງ ແຂວງເຊກອງ ໃນຂັ້ນຕອນການໄດ້ຮັບຜົນປະໂຫຍດ

ຈາກການສຶກສາການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດອບ ໃນເມືອງດາກຈຶງ ແຂວງເຊກອງ, ໃນຂັ້ນຕອນຂອງຂະບວນການຮັບຜົນປະໂຫຍດ, ສໍາລັບພາບລວມແລ້ວເຫັນໄດ້ວ່າ ປະຊາຊົນທີ່ເປັນກຸ່ມຕົວຢ່າງແມ່ນມີສ່ວນຮ່ວມໃນລະດັບຫຼາຍ, ເມື່ອອະທິບາຍເປັນຂໍ້ຢ່າງລະອຽດເຫັນໄດ້ວ່າ ປະຊາຊົນໄດ້ມີສ່ວນຮ່ວມທີ່ໄດ້ຮັບປະໂຫຍດໃນການໄດ້ຮັບການ ມີຊື່ສຽງໃນການປູກກາເຟ ແລະ ໂສມ ຢູ່ໃນລະດັບການມີສ່ວນຮ່ວມຫຼາຍທີ່ສຸດ (ມີຄ່າສະເລ່ຍ =4.05), ປະຊາຊົນຊາວເມືອງດາກຈຶງທີ່ເປັນກຸ່ມຕົວຢ່າງໄດ້ມີສ່ວນຮ່ວມໄດ້ຮັບປະໂຫຍດທີ່ເຮັດໃຫ້ສະມາຊິກທຸກຄົນໃນຄອບຄົວມີອາຊີບ, ເຊິ່ງຈັດໃນການມີສ່ວນຮ່ວມທີ່ຢູ່ໃນລະດັບຫຼາຍທີ່ສຸດ (ມີຄ່າສະເລ່ຍ =3.99). ລະດັບການມີສ່ວນຮ່ວມ ໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ເມືອງດາກຈຶງ ແຂວງເຊກອງ ໃນຂັ້ນຕອນການປະເມີນຜົນ, ການສຶກສາການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດອບ ໃນເມືອງດາກຈຶງ ແຂວງເຊກອງ, ໃນຂັ້ນຕອນຂອງຂະບວນການປະເມີນຜົນ, ສໍາລັບພາບລວມແລ້ວເຫັນໄດ້ວ່າ ປະຊາຊົນເມືອງດາກຈຶງ ແຂວງເຊກອງ ທີ່ເປັນກຸ່ມຕົວຢ່າງແມ່ນມີສ່ວນຮ່ວມໃນລະດັບປານກາງ, ເມື່ອອະທິບາຍເປັນຂໍ້ຢ່າງລະອຽດເຫັນໄດ້ວ່າ ປະຊາຊົນໄດ້ມີສ່ວນຮ່ວມໃນການປະເມີນຜົນ ທີ່ຕອບສະໜອງຂໍ້ມູນໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ ກ່ຽວກັບການປະເມີນຜົນ ເຫັນວ່າ ການມີສ່ວນຮ່ວມແມ່ນຢູ່ໃນລະດັບປານກາງ (ມີຄ່າສະເລ່ຍ =3.38), ປະຊາຊົນຊາວເມືອງດາກຈຶງທີ່ເປັນກຸ່ມຕົວຢ່າງໄດ້ມີສ່ວນຮ່ວມ ໃນຕິດຕາມ ແລະ ຮັບຮູ້ຄຸນະພາບຂອງປູກກາເຟ ແລະ ໃນການປັບປຸງຄຸນະພາບ ເຊິ່ງການມີສ່ວນຮ່ວມຢູ່ໃນລະດັບປານກາງ (ມີຄ່າສະເລ່ຍ 3.17 ແລະ 2.72, ຕາມລໍາດັບ). ການປຽບທຽບລະດັບການມີສ່ວນຮ່ວມຂອງປະຊາຊົນໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ໃນເມືອງດາກຈຶງ ແຂວງເຊກອງ ກັບ ຂໍ້ມູນທົ່ວໄປຂອງກຸ່ມຜູ້ຕອບແບບສອບຖາມ. ຜົນຂອງການສຶກສາປຽບທຽບການມີສ່ວນຮ່ວມຂອງປະຊາຊົນ ໃນການປູກກາເຟ ແລະ ໂສມເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ໃນເມືອງດາກຈຶງ ແຂວງເຊກອງນີ້ເຫັນໄດ້ວ່າ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເມື່ອຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ທີ່ມີເພດແຕກຕ່າງກັນ, ມີອາຍຸທີ່ແຕກຕ່າງກັນ, ມີລະດັບການສຶກສາທີ່ແຕກຕ່າງກັນ ແລະ ມີລາຍໄດ້ຕໍ່ເດືອນທີ່ແຕກຕ່າງກັນ, ແມ່ນທັງໝົດນີ້ ຜູ້ຕອບແບບສອບຖາມແມ່ນມີລະດັບການມີສ່ວນຮ່ວມທີ່ບໍ່ແຕກຕ່າງກັນທາງດ້ານສະຖິຕິ, ທີ່ມີຄ່າຄວາມເຊື່ອໝັ້ນທີ່ 0.05

ການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ໃນເມືອງດາກຈຶງ ແຂວງເຊກອງ, ສໍາລັບປະຊາຊົນກຸ່ມຕົວຢ່າງແມ່ນ ເພດຊາຍ (ຄ່າສະເລ່ຍ=3.58) ມີລະດັບການມີສ່ວນຮ່ວມໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດອບ ຫຼາຍກວ່າ ປະຊາກອນກຸ່ມຕົວຢ່າງ ທີ່ເປັນເພດຍິງ

ປະຊາຊົນເມືອງດາກຈຶງທີ່ມີອາຍຸ ຕ່ຳກວ່າ 18 ປີ (ຄ່າສະເລ່ຍ=3.59) ມີ ລະດັບຂອງມີສ່ວນຮ່ວມໃນການປູກກາເຟ ແລະ ໂສມ ເພື່ອສ້າງຜະລິດຕະພັນສິນຄ້າ ໂອດ່ອບ ຫຼາຍຫວ່າ ປະຊາຊົນເມືອງດາກຈຶງທີ່ມີອາຍຸ 26-35 ປີ ອາຍຸລະຫວ່າງ 46-55 ປີ, ອາຍຸລະຫວ່າງ 18-25 ປີ, ອາຍຸລະຫວ່າງ 46-55 ປີ ແລະ ອາຍຸຫຼາຍກວ່າ 56 ປີ ຕາມລຳດັບ.

ປະຊາຊົນເມືອງດາກ ທີ່ເປັນກຸ່ມຕົວຢ່າງ ທີ່ມີລະດັບການສຶກສາວິຊາຊີບທີ່ຕ່ຳກວ່າ ປະລິນຍາຕີ (ຄ່າສະເລ່ຍ=3.57) ມີລະດັບຂອງການມີສ່ວນຮ່ວມໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດ່ອບ ຫຼາຍກວ່າ ປະຊາຊົນທີ່ເປັນກຸ່ມຕົວຢ່າງຂອງເມືອງດາກຈຶງທີ່ມີລະດັບການສຶກສາຕ່ຳກວ່າມັດທະຍົມຕອນປາຍ, ລະດັບການສຶກສາປະລິນຍາຕີຂຶ້ນໄປ ແລະ ລະດັບການສຶກສາຈົບມັດທະຍົມປາຍ, ຕາມລຳດັບ.

ປະຊາຊົນເມືອງດາກຈຶງທີ່ເປັນກຸ່ມຕົວຢ່າງ ທີ່ມີລາຍໄດ້ ຕ່ຳກວ່າ 1,500,000 ກີບ(ຄ່າສະເລ່ຍ=3.71) ໄດ້ມີລະດັບການມີສ່ວນຮ່ວມໃນການປູກກາເຟ ແລະ ໂສມເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ໃນເມືອງດາກຈຶງ, ແຂວງເຊກອງ ຫຼາຍກວ່າ ປະຊາຊົນເມືອງດາກຈຶງທີ່ເປັນກຸ່ມຕົວຢ່າງທີ່ມີລາຍໄດ້ລະຫວ່າງ 3,500,001-4,500,000 ກີບ, ມີລາຍໄດ້ລະຫວ່າງ 1,500,001-2,500,000 ກີບ, ມີລາຍໄດ້ຫຼາຍກວ່າ 5,500,000 ກີບ, ມີລາຍໄດ້ລະຫວ່າງ 2,500,001-3,500,000 ກີບ ແລະ ມີລາຍໄດ້ລະຫວ່າງ 4,500,001-5,500,000 ກີບ, ຕາມລຳດັບ

**4. ວິພາກຜົນ**

ການສຶກສາ ການມີສ່ວນຮ່ວມຂອງປະຊາຊົນໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດອບ ໃນເມືອງດາກຈຶງ ແຂວງເຊກອງ ໄດ້ມີການອະພິປາຍຜົນຄື:

ສົມມຸດຖານ 1 ປະຊາຊົນແມ່ນມີສ່ວນຮ່ວມໃນການປູກໂສມ ແລະ ກາເຟ ເພື່ອສ້າງຜະລິດຕະພັນສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນເມືອງດາກຈຶງ, ແຂວງເຊກອງຢູ່ໃນລະດັບກາງຂຶ້ນໄປ

ຈາກຜົນຂອງການວິເຄາະຕົວຢ່າງ 234 ແບບສອບຖາມເຫັນໄດ້ວ່າ ປະຊາຊົນກຸ່ມຕົວຢ່າງແມ່ນມີລະດັບຂອງການມີສ່ວນຮ່ວມໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ເມືອງດາກຈຶງ ແຂວງເຊກອງ ແມ່ນຢູ່ໃນລະດັບກາງຂຶ້ນໄປ ເຊິ່ງໄດ້ເປັນໄປຕາມການຕັ້ງສົມມຸດຖານ. ຜົນຂອງການສຶກສາອອກມາໃນຮູບແບບນີ້ກໍ່ອາດຈະເປັນຍ້ອນ ອາຊີບຫຼັກຂອງປະຊາຊົນໃນເຂດເມືອງດາກຈຶງແມ່ນເຮັດການກະສິກຳ ໂດຍສະເພາະແມ່ນການກະສິກຳປູກກາເຟ ແລະ ປູກໂສມ ເພື່ອລ້ຽງຄອບຄົວ, ແລະ ພາຍຫຼັງ ທີ່ມີຜະລິດຕະພັນສິນຄ້າໂອດ່ອບ ກໍ່ຍິ່ງເຮັດໃຫ້ຜົນຜະລິດທາງດ້ານກະສິກຳຂອງພວກເຂົາເຈົ້ານັບມື້ນັບເພີ່ມຂຶ້ນ ເພື່ອໃຫ້ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ບໍລິໂພກ.

**ສົມມຸດຖານທີ 2** ປະຊາຊົນທີ່ມີ ເພດ, ອາຍຸ, ລະດັບການສຶກສາ ແລະ ລາຍໄດ້ ທີ່ແຕກຕ່າງກັນ ມີສ່ວນຮ່ວມເພື່ອສ້າງຜະລິດຕະພັນສິນຄ້າເມືອງດາກຈຶງ, ແຂວງເຊກອງ ທີ່ບໍ່ແຕກຕ່າງກັນເຊິ່ງ. ຜົນຂອງການສຶກສາ ສັງເກດເຫັນໄດ້ວ່າ ຄ່າ $\alpha$ ໃນແຕ່ລະການປຽບທຽບ ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ບໍ່ວ່າຈະເປັນທາງດ້ານເພດ, ທາງອາຍຸ, ທາງດ້ານລະດັບການສຶກສາ ແລະ ລາຍໄດ້ຕໍ່ເດືອນເຫັນໄດ້ວ່າ ຜົນຂອງການຫາຄ່າລະດັບການມີສ່ວນຮ່ວມຂອງປະຊາຊົນໃນການປູກກາເຟ ແລະ ໂສມເພື່ອເປັນຜະລິດຕະພັນສິນຄ້າໂອດ່ອບ ໃນເມືອງ

ດາກຈຶງ ແຂວງເຊກອງ ແມ່ນບໍ່ມີຄວາມແຕກຕ່າງກັນທາງດ້ານສະຖິຕິ. ເຊິ່ງສອດຄ່ອງກັບ ກັນຕະຊາ ສີອາຢຸດ (2021) ໄດ້ເຮັດ ການສຶກສາຂະບວນການມີສ່ວນຮ່ວມຂອງຊຸມຊົນທ່ອງທ່ຽວໂອທອບນະວັດວິຖີ ບ້ານຕົ້ນໂພ ຈັງຫວັດປະທຸມທານີ ເພື່ອການທ່ອງທ່ຽວແບບຍືນຍົງ, ໃນການສຶກສາຄັ້ງນີ້ໄດ້ມີຈຸດປະສົງ, ການປຽບທຽບຄວາມຄິດເຫັນຕໍ່ກິດຈະກຳພາຍໃນຊຸມຊົນທາອງທ່ຽວໂອທອບນະວັດວິຖີ ຜູ້ຕອບແບບສອບຖາມທີ່ມີອາຍຸ ແລະ ເພດແຕກຕ່າງກັນ ມີຄວາມຄິດເຫັນໃນການລວມບໍ່ແຕກຕ່າງກັນ ແຕ່ວ່າຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາ ແລະ ລາຍໄດ້ສະເລ່ຍຕໍ່ເດືອນແຕກຕ່າງກັນ ມີຄວາມຄິດເຫັນໃນພາບລວມແຕກຕ່າງກັນ ທາງດ້ານສະຖິຕິ 0.05. ແລະ ກໍ່ຍັງສອດຄ່ອງກັບ ຂະນິດຖາໄຊບິນ (2020), ໄດ້ເຮັດການສຶກສາເຖິງ ປັດໄຈທີ່ສົ່ງຜົນຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວ OTOP ນະວັດວິຖີ ໃນເຂດອຳເພີນາຫົມ ຈັງຫວັດນະຄອນພະນົມ ການມສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວໂອທອບນະວັດວິຖີເມື່ອຈຳແນກຕາມລະດັບການສຶກສາ, ອາຊີບ, ລາຍໄດ້ການສຶກສາ ແລະ ຕຳບົນທີ່ແຕກຕ່າງກັນແມ່ນມີລະດັບການມີສ່ວນຮ່ວມທີ່ແຕກຕ່າງກັນທາງດ້ານສະຖິຕິ 0.05, ເມື່ອຈຳແນກຕາມເພດ ແລະ ອາຍຸທີ່ແຕກຕ່າງກັນເຫັນໄດ້ວ່າ ລະດັບການມີສ່ວນຮ່ວມແມ່ນບໍ່ມີຄວາມແຕກຕ່າງກັນ.

## 5. ສະຫຼຸບຜົນ

ການສຶກສາ ການມີສ່ວນຮ່ວມຂອງປະຊາຊົນ ໃນການປູກໂສມ ແລະ ກາເຟ ເພື່ອສ້າງເປັນຜະລິດຕະພັນສິນຄ້າ ໂອດອບ ໃນເມືອງດາກຈຶງ ແຂວງເຊກອງ ໄດ້ມີການອະພິປາຍຜົນຄື: ປະຊາຊົນແມ່ນມີສ່ວນຮ່ວມໃນການປູກໂສມ ແລະ ກາເຟ ເພື່ອສ້າງຜະລິດຕະພັນສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນເມືອງດາກຈຶງ, ແຂວງເຊກອງຢູ່ໃນລະດັບກາງຂຶ້ນໄປ. ຈາກຜົນຂອງການວິເຄາະຕົວຢ່າງ 234 ແບບສອບຖາມເຫັນໄດ້ວ່າ ປະຊາຊົນກຸ່ມຕົວຢ່າງແມ່ນມີລະດັບຂອງການມີສ່ວນຮ່ວມໃນການປູກກາເຟ ແລະ ໂສມ ເພື່ອສ້າງເປັນຜະລິດຕະພັນສິນຄ້າໂອດ່ອບ ເມືອງດາກຈຶງ ແຂວງເຊກອງ ແມ່ນຢູ່ໃນລະດັບກາງຂຶ້ນໄປ ເຊິ່ງໄດ້ເປັນໄປຕາມການຕັ້ງສົມມຸດຖານ. ຜົນຂອງການສຶກສາອອກມາໃນຮູບແບບນີ້ກໍ່ອາດຈະເປັນຍ້ອນ ອາຊີບຫຼັກຂອງປະຊາຊົນໃນເຂດເມືອງດາກຈຶງແມ່ນເຮັດການກະສິກຳ ໂດຍສະເພາະແມ່ນການກະສິກຳປູກກາເຟ ແລະ ປູກໂສມ ເພື່ອລ້ຽງຄອບຄົວ, ແລະ ພາຍຫຼັງ ທີ່ມີຜະລິດຕະພັນສິນຄ້າໂອດ່ອບ ກໍ່ຍິ່ງເຮັດໃຫ້ຜົນຜະລິດທາງດ້ານກະສິກຳຂອງພວກເຂົາເຈົ້ານັບມື້ນັບເພີ່ມຂຶ້ນ ເພື່ອໃຫ້ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ບໍລິໂພກ. ປະຊາຊົນທີ່ມີ ເພດ, ອາຍຸ, ລະດັບການສຶກສາ ແລະ ລາຍໄດ້ ທີ່ແຕກຕ່າງກັນ ມີສ່ວນຮ່ວມເພື່ອສ້າງຜະລິດຕະພັນສິນຄ້າເມືອງດາກຈຶງ, ແຂວງເຊກອງ ທີ່ບໍ່ແຕກຕ່າງກັນເຊິ່ງ. ຜົນຂອງການສຶກສາສັງເກດເຫັນໄດ້ວ່າ ຄ່າ $\alpha$ ໃນແຕ່ລະການປຽບທຽບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ບໍ່ວ່າຈະເປັນທາງດ້ານເພດ, ທາງອາຍຸ, ທາງດ້ານລະດັບການສຶກສາ ແລະ ລາຍໄດ້ຕໍ່ເດືອນ ເຫັນໄດ້ວ່າ ຜົນຂອງການຫາຄ່າລະດັບການມີສ່ວນຮ່ວມຂອງປະຊາຊົນໃນການປູກກາເຟ ແລະ ໂສມ ເພື່ອເປັນຜະລິດຕະພັນສິນຄ້າໂອດ່ອບ ໃນເມືອງດາກຈຶງ ແຂວງເຊກອງ ແມ່ນບໍ່ມີຄວາມແຕກຕ່າງກັນທາງດ້ານສະຖິຕິ. ເຊິ່ງສອດຄ່ອງກັບ ກັນຕະຊາ ສີອາຢຸດ (2021) ໄດ້ເຮັດການສຶກສາຂະບວນການມີສ່ວນຮ່ວມຂອງຊຸມຊົນທ່ອງທ່ຽວໂອທອບນະວັດວິຖີບ້ານຕົ້ນໂພ ຈັງຫວັດປະທຸມທານີ ເພື່ອການທ່ອງທ່ຽວແບບຍືນຍົງ, ໃນການສຶກສາຄັ້ງນີ້ໄດ້ມີຈຸດປະສົງ, ການປຽບທຽບຄວາມຄິດເຫັນຕໍ່ກິດຈະກຳພາຍໃນຊຸມຊົນທາອງທ່ຽວໂອທອບນະວັດວິຖີ ຜູ້ຕອບແບບສອບຖາມທີ່ມີ

ອາຍຸ ແລະ ເພດແຕກຕ່າງກັນ ມີຄວາມຄິດເຫັນໃນການລວມບໍ່ແຕກຕ່າງກັນ ແຕ່ວ່າຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາ ແລະ ລາຍໄດ້ສະເລ່ຍຕໍ່ເດືອນແຕກຕ່າງກັນ ມີຄວາມຄິດເຫັນໃນພາບລວມແຕກຕ່າງກັນ ທາງດ້ານສະຖິຕິ 0.05. ແລະ ກໍ່ຍັງສອດຄ່ອງກັບ ຂະນິດຖາ ໄຊບິນ (2020), ໄດ້ເຮັດການສຶກສາເຖິງ ປັດໃຈທີ່ສົ່ງຜົນຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວ OTOP ນະວັດວິຖີ ໃນເຂດອຳເພີນາທົມ ຈັງຫວັດນະຄອນພະນົມ ການມສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວໂອທອບນະວັດວິຖີເມື່ອຈຳແນກຕາມລະດັບການສຶກສາ, ອາຊີບ, ລາຍໄດ້ການສຶກສາ ແລະ ຕຳບົນທີ່ແຕກຕ່າງກັນ ແມ່ນມີລະດັບການມີສ່ວນຮ່ວມທີ່ແຕກຕ່າງກັນທາງດ້ານສະຖິຕິ.

**6. ເອກະສານອ້າງອີງ**


ກະຊວງກະສິກຳ ແລະ ປ່າໄມ້.(2016). ແຜນງານຊີວະນາໆພັນ ກະສິກຳແຫ່ງຊາດ ແລະ ແຜນປະຕິບັດງານ ຄັ້ງທີ II (2015-2025), ເດືອນທັນວາ 2016.

ກະຊວງ ກະສິກຳ ແລະ ປ່າໄມ້.(2021). ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025), ເລກທີ 0303/ກປ, ນະຄອນຫຼວງວຽງຈັນ, ວັນທີ 03 ມິຖຸນາ 2021.

ກະຊວງແຜນການ ແລະ ການລົງທຶນ.(2016). ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາ ເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025), ນະຄອນຫຼວງວຽງຈັນ ລົງວັນທີ 01 ມິຖຸນາ 2016.

ກະຊວງອຸດສາຫະກຳ ແລະ ການຄ້າ.(2017). ຂໍ້ຕົກລົງວ່າດ້ວຍສິນຄ້າ ໜຶ່ງເມືອງ, ໜຶ່ງຜະລິດຕະພັນແຫ່ງຊາດ. ເລກທີ 1225/ອຄ.ກສຄ. ລົງວັນທີ 01 ເດືອນສິງຫາ 2017.

ກິດຕິມາ ປຣີດີດີລົກ.(1986). ທິດສະດີ ການບໍລິຫານອົງກອນ. ທະນະການພິມ, ກຸງເທບ.(ພາສາໄທ).

ກັນຕະຊາ ສີອາຢຸດ (2021). ການສຶກສາກ່ຽວກັບການມີ ສ່ວນຮ່ວມຂອງຊຸມຊົນທ່ອງທ່ຽວໂອທອບນະວັດວິຖີບ້ານຕົ້ນໂພ ຈັງຫວັດປະທຸມທານີ. ວິທະຍານິພົນ ສິນລະປະສາດບັນດິດ, ສາຂາ ການຈັດການທ່ອງທ່ຽວແບບບູລະນະການ, ຄະນະວັດທະນະທຳສິ່ງແວດລ້ອມ ແລະ ການທ່ອງທ່ຽວ. ມະຫາວິທະຍາໄລ ສີລິນະຄະລິນວິໂຣດ. (ພາສາໄທ)

ກົມອຸທິຍານແຫ່ງຊາດໄທ ສັດປ່າ ແລະ ພັນພືດ.(2009). ຄູ່ມືການສ້າງຝາຍຕົ້ນນໍ້າລຳທານ. ສຳນັກອະນຸລັກ ແລະ ຈັດການຕົ້ນນໍ້າ. ການອຸທິຍານແຫ່ງຊາດ, ສັດປ່າ ແລະ ພັນພືດ, ກຸງເທບມະຫານະຄອນ.(ພາສາໄທ)

ໂກວິດ ພວງງາມ (2002). ຄວາມຮູ້ ທັດສະນະຄະຕິ ແລະ ການປະຕິບັດຂອງປະຊາຊົນໃນການມີສ່ວນຮ່ວມຕໍ່ການບໍລິຫານງານແບບກະຈາຍອຳນາດ. ກຸງເທບ: ກຸ່ມງານວິໄຈ ແລະ ພັດທະນາ ສຳນັກວິຊາການ ສຳນັກເລຂາທິການສະພາຜູ້ແທນ.(ພາສາໄທ)

ຂະນິດຖາ ໄຊບິນ (2020). ປັດໃຈທີ່ສົ່ງຜົນຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວ OTOP ນະວັດວິຖີ ໃນເຂດອຳເພີນາທົມ ຈັງຫວັດນະຄອນພະນົມ. ມະຫາວິທະຍາໄລຣາຊພັດສະກົນນະຄອນ.(ພາສາໄທ)

ສະພາແຫ່ງຊາດ (1998). ກົດໝາຍວ່າດ້ວຍກະສິກຳ, ສະພາແຫ່ງຊາດ ລົງວັນທີ 01/98ສພຊ, ລົງວັນທີ 10 ຕຸລາ 1998.

ສະກຸນ ວົງກາລະສິນ (2006). ການດຳເນີນງານ ແລະ

ການມີສ່ວນຮ່ວມຂອງກຸ່ມອອມຊັບເພື່v ຜະລິດ

ບ້ານໂນນທອງ, ຕຳບົນບ້ານກອກ, ອຳເພີ ຈັດຕຸລັດ, ຈັງຫວັດໄຊຍະພູມ. (ວິທະຍາ ນິພົນປະລິນຍາໂທ), ມະຫາສາຣະຄາມ: ມະຫາວິທະຍາໄລສິນທອນ ວິໂຣດ ມະຫາ ສາຣະຄາມ.(ພາສາໄທ)

ສິຣິນທອນ ເກສອນ (2002). ພົນລະວັດສິດທິຊຸມ ຊົນພື້ນບ້ານຄອງນາທັບ (ພາສາໄທ) ສິນທະຍາ ພົນສີ.(2002). ທິດສະດີ ແລະ ຫຼັກການພັດທະນາຊຸມຊົນ. ໂອດຽນສໂຕ,ກຸງ ເທບມະຫານະຄອນ.(ພາສາໄທ)

ສະຫຼາດ ຈັນທະສິມບັດ.(2011). ການມີສ່ວນຮ່ວມ ຂອງຊຸມຊົນໃນການຈັດການສຶກສາເພື່ອ ພັດທະນາທ້ອງຖິ່ນ. ວາລະສານການ ບໍລິຫານ ແລະ ພັດທະນາ. ປີທີ 1 ສະບັບທີ 4 ກໍລະກົດ-ສິງຫາ 2011. ມະຫາວິທະຍາໄລ ມະຫາສາລະຄາມ.(ພາສາໄທ)

ສຸລີຊັນ ແກ້ວອ່ອນສີ, ໄພສານ ພາກພຽນ ແລະ ປະສິດ ກຸນບຸນຍາ (2020). ແນວທາງ ພັດທະນາການດຳເນີນງານຂອງກຸ່ມຜະລິດ ສິນຄ້າ ODOP ເມືອງປາກເຊ ແຂວງຈຳປາ ສັກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມະຫາວິທະຍາໄລຣາຊະພັດອຸບົນຣາຊະທານີ, ປະເທດ ໄທ. Journal of MCU Ubon Review, Vol.5. No.3 September-December 2020.ໜ້າ 339-352 (ພາສາໄທ)

ນັດທິວ ຈັນທະສາໂຣ (2017). ປັດໄຈທີ່ສົ່ງຜົນຕໍ່ ການພັດທະນາຊຸມຊົນໃນເຂດເທສະບານຕຳ ບົນແກດຳ, ອຳເພີແກດຳ, ຈັງຫວັດມະຫາ ສາລະຄາມ (ວິທະຍານິພົນປະລິນຍາໂທ) ມະຫາວິທະຍາໄລຣາຊະພັດ ມະຫາສາລະ ຄາມ (ພາສາໄທ).